ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 814 /ລບ

ນະຄອນຫຼວງວຽງຈັນ, ວັນທີ 10 / 12 / 25

# ດຳລັດ
# ວ່າດ້ວຍເຂດເຕັກໂນໂລຊີລະດັບສູງ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ເຕັກໂນໂລຊີລະດັບສູງ ສະບັບເລກທີ 07/ສພຊ ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 1307/ກຕສ, ລົງວັນທີ 13 ພຶດສະພາ 2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານເຂດເຕັກໂນໂລຊີລະດັບສູງ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຖືກຕ້ອງ, ສະດວກ, ວ່ອງໄວ ແລະ ໂປ່ງໃສ ແນໃສ່ດຶງດູດ ແລະ ສົ່ງເສີມການລົງທຶນ ພາຍໃນ ແລະ ຕ່າງປະເທດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ເຂດເຕັກໂນໂລຊີລະດັບສູງ**

ເຂດເຕັກໂນໂລຊີລະດັບສູງ ຂຽນຫຍໍ້ວ່າ " ຂຕສ " ຂຽນເປັນພາສາອັງກິດ: High Technology Zone " HTZ " ແມ່ນສະຖານທີ່ຈຸດສຸມວຽກງານຄົ້ນຄວ້າ ແລະ ພັດທະນາ, ນຳໃຊ້ນະວັດຕະກຳໃນການຜະລິດເປັນສິນຄ້າ, ການບົ່ມເພາະເຕັກໂນໂລຊີລະດັບສູງ, ການບົ່ມເພາະວິສາຫາສະກິດເຕັກໂນໂລຊີລະດັບສູງ, ສູນນະວັດຕະກຳ, ການສ້າງບຸກຄະລາກອນ, ການຜະລິດຜະລິດຕະພັນ, ການບໍລິການ, ທຸລະກິດທີ່ປະຢັດຊັບພະຍາ ກອນທຳມະຊາດ ແລະ ພະລັງງານ, ນຳໃຊ້ພະລັງງານທົດແທນ ເພື່ອສົ່ງເສີມການລົງທຶນ ແລະ ຮັບປະກັນການພັດທະນາຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ພັດທະນາເຂດເຕັກໂນໂລຊີລະດັບສູງ** ໝາຍເຖິງ ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ລົງທຶນພັດທະນາລະບົບໂຄງລ່າງພື້ນຖານ ຂອງ ຂຕສ;
2. **ຜູ້ລົງທຶນໃນເຂດເຕັກໂນໂລຊີລະດັບສູງ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ລົງທຶນ ເພື່ອດຳເນີນທຸລະກິດ ໃດໜຶ່ງ ຢູ່ໃນ ຂຕສ;

3. **ການພັດທະນາເຂດເຕັກໂນໂລຊີລະດັບສູງ** ໝາຍເຖິງ ການລົງທຶນພັດທະນາໂຄງລ່າງພື້ນຖານ ຂອງ ຂຕສ ເປັນຕົ້ນ ທີ່ດິນ, ການກໍ່ສ້າງເສັ້ນທາງ, ສໍານັກງານຫ້ອງການ ແລະ ບັນດາພື້ນຖານວັດຖຸ ເຕັກນິກ;
4. **ການບົ່ມເພາະເຕັກໂນໂລຊີລະດັບສູງ** ໝາຍເຖິງ ຂະບວນການຄົ້ນຄວ້າ, ພັດທະນາ, ດັດປັບຜົນ ຂອງ ການຄົ້ນຄວ້າທາງດ້ານວິທະຍາສາດ ຫຼື ດັດປັບມາຈາກເຕັກໂນໂລຊີລະດັບສູງ ທີ່ຍັງບໍ່ທັນສົມບູນ ໂດຍຜ່ານການຊ່ວຍໜູນຈາກໂຄງລ່າງພື້ນຖານເຕັກນິກ, ແຫຼ່ງກໍາລັງແຮງ ແລະ ການບໍລິການທີ່ຈໍາ ເປັນຂອງສູນບົ່ມເພາະເຕັກໂນໂລຊີລະດັບສູງ ທີ່ມີຄຸນປະໂຫຍດສູງ ທາງດ້ານການຄ້າ ເພື່ອນໍາໄປ ພັດທະນາເປັນທຸລະກິດໃໝ່ ແລະ ຜະລິດຕະພັນນະວັດຕະກໍາ;
5. **ການບົ່ມເພາະວິສາຫະກິດເຕັກໂນໂລຊີລະດັບສູງ** ໝາຍເຖິງ ຂະບວນການນໍາໃຊ້ເຕັກໂນໂລຊີ ລະດັບສູງ ເຂົ້າໃນການດໍາເນີນທຸລະກິດ ແລະ ບໍລິຫານວິສາຫະກິດ ຂອງສູນບົ່ມເພາະວິສາຫະກິດ ເພື່ອໃຫ້ເກີດເປັນວິສາຫະກິດໃໝ່ ທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ, ເຮັດໃຫ້ໄລຍະການ ຜະລິດສັ້ນລົງ ຄຸນນະພາບຜະລິດຕະພັນສູງຂຶ້ນ, ຫຼຸດຕົ້ນທຶນການຜະລິດ ແລະ ຫຼຸດການນໍາໃຊ້ແຮງງານ;
6. **ສູນນະວັດຕະກໍາ** ໝາຍເຖິງ ສະຖານທີ່ຄົ້ນຄວ້າ, ສົ່ງເສີມ ແລະ ພັດທະນານະວັດຕະກໍາ ລວມທັງ ການໃຫ້ຄໍາປຶກສາ, ການຝຶກອົບຮົມ ແລະ ການສ້າງເຄືອຂ່າຍ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານເຂດເຕັກໂນໂລຊີລະດັບສູງ**

ລັດ ເອົາໃຈໃສ່ພັດທະນາວຽກງານ ເຂດເຕັກໂນໂລຊີລະດັບສູງ ດ້ວຍການສ້າງບຸກຄະລາກອນ, ສ້າງ ໂຄງລ່າງພື້ນຖານ, ສະໜອງງົບປະມານ ແລະ ວັດຖຸປະກອນທີ່ຈໍາເປັນ ພ້ອມທັງສ້າງເງື່ອນໄຂ ແລະ ອໍານວຍ ຄວາມສະດວກ ໃຫ້ວຽກງານດັ່ງກ່າວ ດໍາເນີນໄປ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

ລັດສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລົງທຶນເຂົ້າໃນການພັດທະນາ ເຂດເຕັກໂນໂລຊີ ລະດັບສູງ ແລະ ກິດຈະ ການຢູ່ພາຍໃນ ເຂດເຕັກໂນໂລຊີລະດັບສູງ ເພື່ອຍົກສູງການຜະລິດ ແລະ ການ ບໍລິການ ໃຫ້ມີການຂະຫຍາຍຕົວ.

ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃຫ້ຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການ ສາມາດ ເຂົ້າເຖິງແຫຼ່ງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງ ໃນການພັດທະນາ ເຂດເຕັກໂນໂລຊີ ລະດັບສູງ;

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ຕາມທີ່ກໍານົດໄວ້ໃນດໍາລັດ ສະບັບນີ້, ກົດໝາຍວ່າດ້ວຍ ເຕັກໂນໂລຊີລະດັບສູງ, ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ກົດໝາຍ ອື່ນທີ່ກ່ຽວຂ້ອງ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານເຂດເຕັກໂນໂລຊີລະດັບສູງ**

ການເຄື່ອນໄຫວວຽກງານ ຂຕສ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຍຸດທະສາດການ ພັດທະນາ ເສດຖະກິດດິຈິຕອນ ແຫ່ງຊາດ;
2. ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສົ່ງເສີມ ແລະ ອະນຸລັກວັດທະນະທໍາ ອັນດີງາມ ຂອງຊາດ;
3. ຮັບປະກັນການບໍລິການໃຫ້ມີ ຄວາມສະດວກ, ວ່ອງໄວ, ຍຸຕິທໍາ, ໂປ່ງໃສ, ເປີດເຜີຍ ແລະ ສາມາດ ກວດສອບໄດ້;
4. ຮັບປະກັນ ຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ;
5. ຮັບປະກັນ ການປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ມາດຕາ 6 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບວຽກງານເຂດເຕັກໂນໂລຊີລະດັບສູງ.

## ໝວດທີ 2
## ການພັດທະນາເຂດເຕັກໂນໂລຊີລະດັບສູງ

ມາດຕາ 7 ການກຳນົດຈຸດທີ່ຕັ້ງເຂດເຕັກໂນໂລຊີລະດັບສູງ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ປະສານສົມທົບກັບກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າກຳນົດ ຈຸດທີ່ຕັ້ງ ຂຕສ ເພື່ອສະເໜີລັດຖະບານພິຈາລະນາຮັບຮອງ.

ມາດຕາ 8 ເງື່ອນໄຂການກຳນົດຈຸດທີ່ຕັ້ງເຂດເຕັກໂນໂລຊີລະດັບສູງ

ການກຳນົດຈຸດທີ່ຕັ້ງ ຂຕສ ມີ ເງື່ອນໄຂ ດັ່ງນີ້:

1. ມີທີ່ຕັ້ງເໝາະສົມ, ກຳນົດເນື້ອທີ່ ແລະ ເຂດແດນ ຢ່າງຈະແຈ້ງ;
2. ມີຜົນປະໂຫຍດຕໍ່ ລັດ, ທ້ອງຖິ່ນ ແລະ ປະຊາຊົນ;
3. ສອດຄ່ອງກັບແຜນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ທ້ອງຖິ່ນ;
4. ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ.

ມາດຕາ 9 ຮູບການພັດທະນາເຂດເຕັກໂນໂລຊີລະດັບສູງ

ຮູບການພັດທະນາ ຂຕສ ມີ ສາມ ຮູບການ ດັ່ງນີ້:

1. ລັດລົງທຶນ ຮ້ອຍສ່ວນຮ້ອຍ;
2. ລັດຮ່ວມທຶນກັບເອກະຊົນ;
3. ເອກະຊົນລົງທຶນ ຮ້ອຍສ່ວນຮ້ອຍ.

ມາດຕາ 10 ການສະເໜີຂໍພັດທະນາເຂດເຕັກໂນໂລຊີລະດັບສູງ

ນິຕິບຸກຄົນ ທີ່ມີຈຸດປະສົງລົງທຶນພັດທະນາ ຂຕສ ຕາມຈຸດທີ່ລັດຖະບານ ກຳນົດ ໃຫ້ຍື່ນຄຳຮ້ອງພ້ອມດ້ວຍເອກະສານປະກອບ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

ມາດຕາ 11 ເງື່ອນໄຂຂອງຜູ້ສະເໜີຂໍພັດທະນາເຂດເຕັກໂນໂລຊີລະດັບສູງ

ຜູ້ສະເໜີຂໍພັດທະນາ ຂຕສ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຖານະນິຕິບຸກຄົນ;
2. ມີຖານະການເງິນທີ່ເຂັ້ມແຂງ ໂດຍໄດ້ຮັບການຢັ້ງຢືນ ຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ ທີ່ເຊື່ອຖືໄດ້;
3. ມີປະສົບການ ແລະ ໄດ້ຮັບຜົນສຳເລັດ ໃນການດຳເນີນທຸລະກິດ ໂດຍມີເອກະສານຢັ້ງຢືນ.

ມາດຕາ 12 ເອກະສານປະກອບການສະເໜີຂໍພັດທະນາເຂດເຕັກໂນໂລຊີລະດັບສູງ

ເອກະສານປະກອບການສະເໜີຂໍພັດທະນາ ຂຕສ ມີ ດັ່ງນີ້:

1. ຄຳຮ້ອງຂໍຕາມແບບພິມ;
2. ສຳເນົາທະບຽນວິສາຫະກິດ;
3. ເອກະສານຢັ້ງຢືນຖານະການເງິນ;

4. ເອກະສານອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ເຕັກໂນໂລຊີລະດັບສູງ ແລະ ກົດໝາຍອື່ນກ່ຽວຂ້ອງ.

**ມາດຕາ 13 ຂັ້ນຕອນການອະນຸຍາດພັດທະນາ ເຂດເຕັກໂນໂລຊີລະດັບສູງ**

ການອະນຸຍາດພັດທະນາ ຂຕສ ມີ ຂັ້ນຕອນ ດັ່ງນີ້:

1. ພາຍຫຼັງ ໄດ້ຮັບຄຳຮ້ອງຂໍພັດທະນາ ຂຕສ ກະຊວງແຜນການ ແລະ ການລົງທຶນຄົ້ນຄວ້າ ໂດຍປະສານສົມທົບກັບກະຊວງ,ອົງການລັດທຽບເທົ່າກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ ກ່ຽວຂ້ອງ ແລ້ວນຳ ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາອະນຸມັດ ລົງນາມບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການພັດທະນາ ຂຕສ;
2. ຜູ້ພັດທະນາ ຂຕສ ດຳເນີນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດເຕັກນິກ, ປະເມີນຜົນກະທົບດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ແລະ ປະຕິບັດໜ້າວຽກອື່ນ ຕາມທີ່ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ;
3. ກະຊວງເຕັກໂນໂລຊີ ແລະ ການສື່ສານ ປະສານສົມທົບກັບ ກະຊວງ, ອົງການທຽບເທົ່າກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຮັບຮອງເອົາ ບົດລາຍງານການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດເຕັກນິກ ກ່ຽວກັບການພັດທະນາ ຂຕສ ແລ້ວລາຍງານຕໍ່ກະຊວງແຜນການ ແລະ ການລົງທຶນ ເພື່ອນຳສະ ເໜີຕໍ່ລັດຖະບານ ພິຈາລະນາອະນຸມັດ ລົງລາຍເຊັນໃນສັນຍາພັດທະນາ ຂຕສ;
4. ຜູ້ພັດທະນາ ຕ້ອງສ້າງຕັ້ງບໍລິສັດໂຄງການ ແລະ ຂໍອະນຸຍາດດຳເນີນທຸລະກິດນຳກະຊວງເຕັກໂນໂລຊີ ແລະ ການສື່ສານ ຕາມກົດໝາຍ ທີ່ກ່ຽວຂ້ອງ.

ສຳລັບ ກຳນົດເວລາ ໃນການພິຈາລະນາ ແຕ່ລະຂັ້ນຕອນ ໃຫ້ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

**ມາດຕາ 14 ການປັກຫຼັກເຂດສຳປະທານ**

ພາຍຫຼັງ ໄດ້ເຊັນສັນຍາພັດທະນາ ຂຕສ ແລ້ວ ກະຊວງເຕັກໂນໂລຊີ ແລະ ການສື່ສານ ປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາ ເພື່ອປັກຫຼັກເຂດສຳປະທານ ຕາມການອະນຸມັດ ຂອງລັດຖະບານ.

**ມາດຕາ 15 ການທົດແທນຄ່າເສຍຫາຍ**

ໃນກໍລະນີ ການກຳນົດພື້ນທີ່ດິນ ຂຕສ ຫາກກວມເອົາດິນ ທີ່ລັດໄດ້ອອກສິດນຳໃຊ້ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຜູ້ພັດທະນາ ຕ້ອງທົດແທນຄ່າເສຍຫາຍ ຕາມກົດໝາຍ ແລະ ສັນຍາພັດທະນາ ຂຕສ.

ຜູ້ພັດທະນາ ຂຕສ ເປັນເຈົ້າການປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ບ່ອນ ຂຕສ ຕັ້ງຢູ່ ເພື່ອດຳເນີນການ ຈັດສັນ, ສຳຫຼວດ, ແກ້ໄຂ ແລະ ປະເມີນ ກ່ຽວກັບບັນຫາທີ່ດິນ ເພື່ອທົດແທນຄ່າເສຍຫາຍ ຕໍ່ຜູ້ໄດ້ຮັບຜົນກະທົບ ຈາກການພັດທະນາ.

**ມາດຕາ 16 ການອອກໃບຕາດິນລັດ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ອອກໃບຕາດິນລັດ ໃຫ້ແກ່ຜູ້ພັດທະນາ ຕາມເນື້ອທີ່ດິນ ທີ່ໄດ້ຈັດສັນ ຫຼື ໄດ້ຊົດເຊີຍຄ່າເສຍຫາຍ ໃຫ້ແກ່ຜູ້ ທີ່ໄດ້ຮັບຜົນກະທົບແລ້ວ.

ມາດຕາ 17 ການນຳໃຊ້ພື້ນທີ່ດິນ

ຜູ້ພັດທະນາ ນຳໃຊ້ພື້ນທີ່ດິນ ເຂົ້າໃນເປົ້າໝາຍການດຳເນີນທຸລະກິດ ໂດຍກົງ ແຕ່ ບໍ່ໃຫ້ເກີນແປດສິບສ່ວນຮ້ອຍ (80%) ຂອງເນື້ອທີ່ທັງໝົດ, ສ່ວນທີ່ເຫຼືອ ໃຫ້ພັດທະນາເປັນພື້ນທີ່ສາທາລະນະປະໂຫຍດ ເປັນຕົ້ນ ສວນສາທາລະນະ ແລະ ພື້ນທີ່ສີຂຽວ.

ມາດຕາ 18 ສິດຂອງຜູ້ພັດທະນາ

ຜູ້ພັດທະນາ ຂຕສ ມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສົ່ງເສີມ ແລະ ອຳນວຍຄວາມສະດວກ ໃນການພັດທະນາ ຂຕສ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ເຕັກໂນໂລຊີລະດັບສູງ, ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ຈາກການລົງທຶນພັດທະນາ ຂອງຕົນ;
3. ໄດ້ຮັບຜົນປະໂຫຍດ ຈາກການເຊົ່າ ຫຼື ການພັດທະນາ, ນຳໃຊ້ທີ່ດິນ ຕາມອາຍຸສັນຍາພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;
4. ເປັນເຈົ້າກຳມະສິດຕໍ່ຊັບສິນ ຂອງຕົນ ເປັນຕົ້ນ ຕຶກ, ອາຄານ ຫຼື ສິ່ງປຸກສ້າງ ໃນທີ່ດິນທີ່ໄດ້ຮັບສຳປະທານ, ມີສິດໂອນກຳມະສິດ ໃຫ້ພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;
5. ສະເໜີຂໍອະນຸມັດນຳຄະນະຄຸ້ມຄອງ ຂຕສ ຕາມລະບຽບການ ກ່ຽວກັບການລົງທຶນພັດທະນາ ເພື່ອດຳເນີນກິດຈະການໃດໜຶ່ງ ຢູ່ໃນ ຂຕສ;
6. ເປີດບັນຊີເງິນຝາກເປັນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ຢູ່ທະນາຄານທຸລະກິດ ຢູ່ ສປປ ລາວ;
7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 19 ພັນທະຂອງຜູ້ພັດທະນາເຂດ

ຜູ້ພັດທະນາ ຂຕສ ມີ ພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ສປປ ລາວ;
2. ສ້າງຕັ້ງບໍລິສັດ ເພື່ອດຳເນີນໂຄງການ ຕາມສັນຍາພັດທະນາ;
3. ປະຕິບັດ ຕາມສັນຍາພັດທະນາ, ແຜນແມ່ບົດການພັດທະນາ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
4. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຢ່າງຄົບຖ້ວນ ຕາມກົດໝາຍ ແລະ ສັນຍາພັດທະນາ;
5. ທົດແທນ ແລະ ຊົດເຊີຍຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຈາກໂຄງການ ຕາມກົດໝາຍ ແລະ ສັນຍາສຳປະທານ;
6. ໃຫ້ການຮ່ວມມືກັບອົງການປົກຄອງທ້ອງຖິ່ນ ແລະ ສົ່ງເສີມການມີສ່ວນຮ່ວມ ໃນການພັດທະນາ ຂອງປະຊາຊົນ ບ່ອນ ຂຕສ ຕັ້ງຢູ່ ແລະ ປະກອບສ່ວນພັດທະນາທ້ອງຖິ່ນ;
7. ສະເໜີຂໍອະນຸມັດນຳຄະນະຄຸ້ມຄອງ ຂຕສ ຕາມລະບຽບການ ກ່ຽວກັບການລົງທຶນພັດທະນາ ເພື່ອດຳເນີນກິດຈະການໃດໜຶ່ງ ຢູ່ໃນ ຂຕສ;
8. ສົ່ງເສີມການນຳໃຊ້ແຮງງານລາວ ໂດຍສະເພາະແຮງງານລາວທ້ອງຖິ່ນ, ເພດຍິງ ແລະ ຊົນເຜົ່າ, ພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີລະດັບສູງ ໃຫ້ແກ່ຜູ້ອອກແຮງງານລາວ;

9. ເປີດບັນຊີເງິນຝາກ ສະເພາະຢູ່ທະນາຄານທຸລະກິດ ຢູ່ ສປປ ລາວ;
10. ປະກອບສ່ວນທາງດ້ານງົບປະມານ ໃນວຽກງານຕິດຕາມ ກວດກາ ໂຄງການລົງທຶນພັດທະນາ ຂອງຕົນ;
11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວພັດທະນາ ຂຕສ ຕໍ່ຄະນະຄຸ້ມຄອງ ຂຕສ ເປັນແຕ່ລະໄລຍະ;
12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ການລົງທຶນຢູ່ໃນເຂດເຕັກໂນໂລຊີລະດັບສູງ

### ມາດຕາ 20 ການສະເໜີຂໍລົງທຶນໃນເຂດເຕັກໂນໂລຊີລະດັບສູງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນກິດຈະການຢູ່ໃນ ຂຕສ ໃຫ້ສະເໜີຕໍ່ຄະນະຄຸ້ມຄອງ ຂຕສ ເພື່ອຄົ້ນຄວ້າພິຈາລະນາ ແລະ ອະນຸມັດການລົງທຶນ.

ໃນກໍລະນີ ຜູ້ພັດທະນາ ທີ່ມີຈຸດປະສົງລົງທຶນກິດຈະການໃດໜຶ່ງ ໃນ ຂຕສ ນອກຈາກບັນດາກິດຈະການຕາມທີ່ໄດ້ກຳນົດໄວ້ໃນສັນຍາພັດທະນາ ຕ້ອງໄດ້ສ້າງຕັ້ງເປັນວິສາຫະກິດຂຶ້ນໃໝ່ ແລະ ປະຕິບັດຕາມການຂໍລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21, 22, 23, 24 ແລະ ມາດຕາ 25 ຂອງດຳລັດສະບັບນີ້.

### ມາດຕາ 21 ເງື່ອນໄຂຜູ້ລົງທຶນໃນເຂດເຕັກໂນໂລຊີລະດັບສູງ

ຜູ້ລົງທຶນຢູ່ໃນ ຂຕສ ຕ້ອງມີ ເງື່ອນໄຂ ດັ່ງນີ້:

1. ມີສັນຍາລົງທຶນກິດຈະການກັບຜູ້ພັດທະນາ;
2. ໄດ້ຮັບອະນຸຍາດດຳເນີນທຸລະກິດ ຈາກຂະແໜງການທີ່ກ່ຽວຂ້ອງ;
3. ມີບຸກຄະລາກອນ ທີ່ມີຄວາມຮູ້ ແລະ ປະສົບການ ກ່ຽວກັບກິດຈະການ;
4. ມີຖານະການເງິນ ທີ່ເຂັ້ມແຂງ ໂດຍໄດ້ຮັບການຢັ້ງຢືນ ຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ ທີ່ເຊື່ອຖືໄດ້;
5. ມີອຸປະກອນ, ເຄື່ອງມື ທີ່ໄດ້ມາດຕະຖານ, ທັນສະໄໝ ແລະ ເໝາະສົມກັບຂະໜາດ ຂອງກິດຈະການ.

### ມາດຕາ 22 ເອກະສານປະກອບຂໍລົງທຶນໃນເຂດເຕັກໂນໂລຊີລະດັບສູງ

ເອກະສານປະກອບຂໍລົງທຶນກິດຈະການຢູ່ໃນ ຂຕສ ມີ ດັ່ງນີ້:

1. ຄຳຮ້ອງຂໍລົງທຶນ ຕາມແບບພິມ;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສັນຍາລົງທຶນກິດຈະການ ກັບ ຜູ້ພັດທະນາ;
4. ສຳເນົາໃບອະນຸຍາດດຳເນີນທຸລະກິດ;
5. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນທຸລະກິດ;
6. ເອກະສານຢັ້ງຢືນຖານະການເງິນ ຈາກສະຖາບັນການເງິນ ທີ່ເຊື່ອຖືໄດ້;
7. ກົດລະບຽບຂອງບໍລິສັດ.

### ມາດຕາ 23 ການພິຈາລະນາອະນຸມັດລົງທຶນໃນເຂດເຕັກໂນໂລຊີລະດັບສູງ

ຄະນະຄຸ້ມຄອງ ຂຕສ ຄົ້ນຄວ້າ ພິຈາລະນາ ອະນຸມັດ ການລົງທຶນ ຢູ່ໃນ ຂຕສ ຢ່າງຊ້າບໍ່ໃຫ້ເກີນ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນ.

ມາດຕາ 24 ສິດ ຂອງຜູ້ລົງທຶນ

ຜູ້ລົງທຶນ ຂຕສ ມີ ສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສົ່ງເສີມ ແລະ ການອໍານວຍຄວາມສະດວກ ໃນການລົງທຶນກິດຈະການ ຢູ່ ຂຕສ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ເຕັກໂນໂລຊີລະດັບສູງ, ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ທີ່ໄດ້ມາຈາກການລົງທຶນ ຂອງຕົນ;
3. ໄດ້ຮັບຜົນປະໂຫຍດ ຈາກການເຊົ່າ, ນໍາໃຊ້ທີ່ດິນ ຫຼື ສິ່ງປຸກສ້າງ, ໃຫ້ບຸກຄົນອື່ນ ສືບທອດສັນຍາເຊົ່າ ຕາມອາຍຸຂອງສັນຍາເຊົ່າ ໂດຍສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ;
4. ເປັນເຈົ້າກໍາມະສິດຕໍ່ຊັບສິນ ຂອງຕົນ ເປັນຕົ້ນ ຕຶກ, ອາຄານ ຫຼື ສິ່ງປຸກສ້າງ ໃນ ຂຕສ, ມີສິດໂອນກໍາມະສິດ ໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;
5. ເປີດບັນຊີເງິນຝາກເປັນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ຢູ່ທະນາຄານທຸລະກິດ ຢູ່ ສປປ ລາວ;
6. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 25 ພັນທະ ຂອງຜູ້ລົງທຶນ

ຜູ້ລົງທຶນ ຂຕສ ມີ ພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ສປປ ລາວ;
2. ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການ ຢ່າງຄົບຖ້ວນ ຕາມກົດໝາຍ;
3. ສົ່ງເສີມການນໍາໃຊ້ແຮງງານລາວ ໂດຍສະເພາະແຮງງານລາວທ້ອງຖິ່ນ, ເພດຍິງ ແລະ ຊົນເຜົ່າ, ພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີລະດັບສູງ ໃຫ້ແກ່ຜູ້ອອກແຮງງານລາວ;
4. ຖືບັນຊີ ຕາມກົດໝາຍວ່າ ດ້ວຍການບັນຊີ;
5. ເປີດບັນຊີເງິນຝາກ ສະເພາະຢູ່ທະນາຄານທຸລະກິດ ຢູ່ ສປປ ລາວ ຕາມກົດໝາຍ;
6. ໃຫ້ການຮ່ວມມື ແລະ ປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 26 ການໂຈະການລົງທຶນ

ການລົງທຶນ ໃນ ຂຕສ ຈະຖືກໂຈະ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ລົງທຶນ;
2. ດໍາເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ຂອງການອະນຸຍາດ;
3. ສ້າງຜົນເສຍຫາຍ ຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
4. ບໍ່ປະຕິບັດພັນທະດ້ານ ພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
5. ປິດກິດຈະການໃນ ຂຕສ ໂດຍບໍ່ໄດ້ຮັບການເຫັນດີ ຈາກຜູ້ພັດທະນາ ແລະ ຄະນະຄຸ້ມຄອງ ຂຕສ ຕໍ່ເນື່ອງ ເປັນເວລາ ສອງປີ;
6. ການໂຈະການລົງທຶນ ມີກໍານົດເວລາ 6 ເດືອນ ເພື່ອໃຫ້ຜູ້ລົງທຶນ ແກ້ໄຂ ຫຼື ປັບປຸງ ໃຫ້ຄືນສູ່ສະພາບປົກກະຕິ.

ມາດຕາ 27 ການຍົກເລີກການລົງທຶນ

ການລົງທຶນ ຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ລົງທຶນ;
2. ບໍ່ດໍາເນີນການແກ້ໄຂ ຫຼື ປັບປຸງ ຕາມການແຈ້ງໂຈະ;
3. ມີຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

## ໝວດທີ 4
## ຄະນະຄຸ້ມຄອງເຂດເຕັກໂນໂລຊີລະດັບສູງ

ມາດຕາ 28 ຄະນະຄຸ້ມຄອງເຂດເຕັກໂນໂລຊີລະດັບສູງ

ຄະນະຄຸ້ມຄອງເຂດເຕັກໂນໂລຊີລະດັບສູງ ແມ່ນ ກົງຈັກການຈັດຕັ້ງໜຶ່ງ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອໃຫ້ປະຕິບັດໜ້າທີ່ປະຈໍາຢູ່ ຂຕສ, ມີພາລະບົດບາດຄຸ້ມຄອງ, ເປັນໃຈກາງປະສານງານ ແລະ ອໍານວຍຄວາມສະດວກໃຫ້ແກ່ການພັດທະນາ ແລະ ການລົງທຶນ ຢູ່ໃນ ຂຕສ.

ມາດຕາ 29 ໂຄງປະກອບບຸກຄະລາກອນຄະນະຄຸ້ມຄອງເຂດເຕັກໂນໂລຊີລະດັບສູງ

ຄະນະຄຸ້ມຄອງເຂດເຕັກໂນໂລຊີລະດັບສູງ ມີຫົວໜ້າຄະນະຄຸ້ມຄອງເຂດ ແລະ ຮອງຫົວໜ້າຄຸ້ມຄອງເຂດຈໍານວນໜຶ່ງ.

ຫົວໜ້າຄະນະຄຸ້ມຄອງເຂດ ມີຕໍາແໜ່ງບໍລິຫານປະເພດ 4 ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ບົນພື້ນຖານການປຶກສາຫາລື ແລະ ເອກະພາບກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນເຂດເຕັກໂນໂລຊີລະດັບສູງຕັ້ງຢູ່.

ຮອງຫົວໜ້າຄະນະຄຸ້ມຄອງເຂດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ.

ດ້ານວຽກງານວິຊາການ, ງົບປະມານ, ບຸກຄະລາກອນ ຂອງຄະນະຄຸ້ມຄອງເຂດ ແມ່ນຂຶ້ນກັບກະຊວງເຕັກໂນໂລຊີ ແລະ ການສື່ສານ.

ມາດຕາ 30 ສິດ ແລະ ໜ້າທີ່ຂອງຄະນະຄຸ້ມຄອງເຂດເຕັກໂນໂລຊີລະດັບສູງ.

ຄະນະຄຸ້ມຄອງ ຂຕສ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກໍາຂໍ້ມູນ, ສະຖິຕິ ກ່ຽວກັບການພັດທະນາ ແລະ ການລົງທຶນ ຢູ່ ຂຕສ;
2. ຄຸ້ມຄອງ ແລະ ຕິດຕາມກວດກາ ການເຄື່ອນໄຫວ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ໃຫ້ສອດຄ່ອງກັບກົດໝາຍ ແລະ ສັນຍາພັດທະນາ;
3. ຄົ້ນຄວ້າ ແລະ ພິຈາລະນາ ອະນຸຍາດ, ໂຈະ ຫຼື ຍົກເລີກ ການລົງທຶນກິດຈະການຢູ່ ຂຕສ;
4. ອໍານວຍຄວາມສະດວກທາງດ້ານເອກະສານ, ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບການພັດທະນາ ແລະ ການລົງທຶນ ໃຫ້ແກ່ຜູ້ພັດທະນາ ແລະ ຜູ້ລົງທຶນ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການ ປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
5. ຄຸ້ມຄອງການ ຈັດສັນ, ນໍາໃຊ້ທີ່ດິນ ແລະ ອອກໃບຢັ້ງຢືນ ກ່ຽວກັບການນໍາໃຊ້ທີ່ດິນ ໃຫ້ແກ່ຜູ້ລົງທຶນ;
6. ຊຸກຍູ້ ແລະ ຕິດຕາມກວດກາ ການປະຕິບັດພັນທະທາງດ້ານການເງິນ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ຕາມກົດໝາຍ ແລະ ສັນຍາພັດທະນາ;

7. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ບ່ອນ ຂຕສ ຕັ້ງຢູ່ ເພື່ອຮັບປະກັນວຽກງານ ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄຸ້ມຄອງຜູ້ຢູ່ອາໄສ ແລະ ຜູ້ອອກແຮງງານພາຍໃນເຂດ;
8. ສັງລວມຄວາມຕ້ອງການດ້ານແຮງງານໃນແຕ່ລະໄລຍະ ແລ້ວປະສານສົມທົບກັບຂະແໜງ ການທີ່ກ່ຽວຂ້ອງ ເພື່ອພັດທະນາສີມືແຮງງານ ແລະ ສະໜອງໃຫ້ ຂຕສ ຕາມຄວາມຕ້ອງການ ໃນແຕ່ລະໄລຍະ;
9. ຊຸກຍູ້ ແລະ ຕິດຕາມກວດກາ ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນການປົກປັກຮັກສາສິ່ງແວດລ້ອມ, ສັງຄົມ ແລະ ວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;
10. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;
11. ຮັບ ແລະ ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ຜູ້ພັດທະນາ, ຜູ້ລົງທຶນ, ຜູ້ອອກແຮງງານ ແລະ ປະຊາຊົນ ທີ່ເກີດຂຶ້ນຢູ່ ຂຕສ ຫຼື ກ່ຽວຂ້ອງກັບ ຂຕສ ທີ່ຕົນຮັບຜິດຊອບ;
12. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ຂອງຕົນ ຕໍ່ອົງການປົກຄອງຂັ້ນແຂວງ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ນະໂຍບາຍສົ່ງເສີມຕໍ່ຜູ້ພັດທະນາ ແລະ ຜູ້ລົງທຶນເຂດເຕັກໂນໂລຊີລະດັບສູງ

### ມາດຕາ 31 ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ

ຜູ້ພັດທະນາ ແລະ ຜູ້ລົງທຶນ ຈະໄດ້ຮັບນະໂຍບາຍສົ່ງເສີມດ້ານພາສີ ແລະ ສ່ວຍສາອາກອນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ເຕັກໂນໂລຊີລະດັບສູງ, ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

### ມາດຕາ 32 ນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນ ແລະ ອະສັງຫາລິມະຊັບ

ຜູ້ພັດທະນາ ມີສິດນຳໃຊ້ທີ່ດິນ ແລະ ອະສັງຫາລິມະຊັບ ໃນ ຂຕສ ແລະ ມີສິດ ນຳເອົາສິດດັ່ງກ່າວໃຫ້ເຊົ່າຕໍ່, ມອບ, ໂອນ ໃຫ້ຜູ້ລົງທຶນພັດທະນາຕາມອາຍຸສັນຍາພັດທະນາ ພາຍຫຼັງທີ່ໄດ້ພັດທະນາສຳເລັດ ຢ່າງໜ້ອຍສີ່ສິບສ່ວນຮ້ອຍ (40%) ຂອງແຜນພັດທະນາ ໂດຍມີການຢັ້ງຢືນຈາກຄະນະຄຸ້ມຄອງ ຂຕສ.

ຜູ້ລົງທຶນ ມີສິດນຳໃຊ້ທີ່ດິນ ແລະ ອະສັງຫາລິມະຊັບ ທີ່ຕົນໄດ້ເຊົ່າ ຫຼື ປຸກສ້າງ ໂດຍສາມາດເອົາສິດດັ່ງກ່າວໃຫ້ເຊົ່າຕໍ່, ຂາຍ, ມອບ ຫຼື ໂອນໃຫ້ຜູ້ລົງທຶນອື່ນ ຕາມອາຍຸສັນຍາເຊົ່າ ໂດຍມີການຢັ້ງຢືນຈາກຄະນະຄຸ້ມຄອງ ຂຕສ.

### ມາດຕາ 33 ນະໂຍບາຍສົ່ງເສີມດ້ານພະລັງງານທົດແທນ

ຜູ້ພັດທະນາ ແລະ ຜູ້ລົງທຶນ ໄດ້ຮັບການສົ່ງເສີມໃຫ້ນຳໃຊ້ພະລັງງານທົດແທນເພື່ອຮັບປະກັນການຕອບສະໜອງພະລັງງານໄຟຟ້າເຂົ້າໃນວຽກງານພາຍໃນເຂດຂອງຕົນ ໂດຍການຜະລິດ, ນຳໃຊ້ ໂດຍກົງ ໂດຍຮັບປະກັນຄວາມສະຫງົບ, ປອດໄພຕໍ່ສັງຄົມ ແລະ ສະພາບແວດລ້ອມ ພາຍໃນ ແລະ ອ້ອມຂ້າງ ຂຕສ ແລະ ຍັງສາມາດຂາຍກະແສໄຟຟ້າທີ່ເຫຼືອໃຊ້ໃຫ້ກັບຜູ້ລົງທຶນອື່ນ.

**ມາດຕາ 34 ນະໂຍບາຍດ້ານວີຊາເຂົ້າ-ອອກປະເທດ**

ຜູ້ພັດທະນາ ແລະ ຜູ້ລົງທຶນ ພ້ອມດ້ວຍ ສະມາຊິກຄອບຄົວຂອງຜູ້ກ່ຽວ ຈະໄດ້ຮັບຄວາມສະດວກໃນການຂຶ້ນທະບຽນ, ອອກບັດອະນຸຍາດພັກເຊົາ ແລະ ວີຊາ ເຂົ້າ-ອອກ ຫຼາຍເທື່ອ ຊຶ່ງແຕ່ລະຄັ້ງບໍ່ເກີນ ຫ້າ ປີ.

ຜູ້ຊ່ຽວຊານ ແລະ ນັກວິຊາການ ທີ່ເປັນຄົນຕ່າງປະເທດ ແລະ ສະມາຊິກຄອບຄົວຂອງຜູ້ກ່ຽວ ຈະໄດ້ຮັບຄວາມສະດວກໃນການຂຶ້ນທະບຽນ, ອອກບັດອະນຸຍາດພັກເຊົາ ແລະ ວີຊາ ເຂົ້າ-ອອກ ຫຼາຍເທື່ອ ຊຶ່ງແຕ່ລະຄັ້ງບໍ່ເກີນ ຫ້າ ປີ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 35 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ເຂົ້າ, ບຸກລຸກ ຫຼື ປຸກສ້າງ ຢູ່ພື້ນທີ່ໃນ ຂຕສ ໂດຍບໍ່ໄດ້ຮັບອະນຸຍາດ;
2. ທັບມ້າງ, ທຳລາຍສິ່ງປຸກສ້າງ ຫຼື ຊັບສິນ ໃນ ຂຕສ;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 36 ຂໍ້ຫ້າມສຳລັບຜູ້ພັດທະນາເຂດເຕັກໂນໂລຊີລະດັບສູງ**

ຫ້າມ ຜູ້ພັດທະນາ ຂຕສ ມີ ພຶດຕິກຳ ດັ່ງນີ້:

1. ພັດທະນາ ຂຕສ ໂດຍບໍ່ຖືກຕ້ອງຕາມແຜນການ ແລະ ສັນຍາພັດທະນາ;
2. ປິດ ຫຼື ນຳໃຊ້ ຂຕສ ເຂົ້າໃນເປົ້າໝາຍອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງ;
3. ໃຫ້ສິນບົນ ຫຼື ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ຜົນປະໂຫຍດໃນທາງທີ່ບໍ່ຖືກຕ້ອງ;
4. ຫຼົບຫຼີກການປະຕິບັດພັນທະ, ເຊື່ອງອຳຂໍ້ມູນ, ສ້າງອຸປະສັກ ແລະ ຂັດຂວາງການປະຕິບັດໜ້າທີ່ວຽກງານ ຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຂອງລັດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 37 ຂໍ້ຫ້າມສຳລັບຜູ້ລົງທຶນໃນເຂດເຕັກໂນໂລຊີລະດັບສູງ**

ຫ້າມ ຜູ້ລົງທຶນໃນ ຂຕສ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການ ບໍ່ຖືກຕ້ອງ ຕາມການອະນຸຍາດ;
2. ໃຫ້ເຊົ່າ ຫຼື ໂອນກິດຈະການ ໃຫ້ຜູ້ທີ່ບໍ່ມີໃບອະນຸຍາດດຳເນີນທຸລະກິດ ແລະ ບໍ່ໄດ້ຮັບການເຫັນດີຈາກຜູ້ພັດທະນາ ແລະ ຄະນະຄຸ້ມຄອງ ຂຕສ;
3. ປິດກິດຈະການ ໂດຍບໍ່ໄດ້ຮັບການເຫັນດີ ຈາກຜູ້ພັດທະນາ ແລະ ຄະນະຄຸ້ມຄອງ ຂຕສ;
4. ໃຫ້ສິນບົນ ຫຼື ສົມຮູ້ຮ່ວມຄິດ ກັບ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ຜົນປະໂຫຍດ ໃນທາງທີ່ບໍ່ຖືກຕ້ອງ;
5. ຫຼົບຫຼີກການປະຕິບັດພັນທະ, ເຊື່ອງອຳຂໍ້ມູນ, ສ້າງອຸປະສັກ ແລະ ຂັດຂວາງການປະຕິບັດໜ້າທີ່ວຽກງານຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 38 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນພະນັກງານວິຊາການ ໃຫ້ທຸລະກິດໃນ ຂຕສ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ຮັບ, ຂໍ, ທວງ ເອົາສິນບົນ; ລຳອຽງ, ກົດໜ່ວງ, ຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ ແລະ ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
3. ເມີນເສີຍ ຕໍ່ຄວາມຮັບຜິດຊອບ ຂອງຕົນ, ຕໍ່ພຶດຕິກຳ ທີ່ບໍ່ຖືກຕ້ອງ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນໃນ ຂຕສ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາວຽກງານເຂດເຕັກໂນໂລຊີລະດັບສູງ

ມາດຕາ 39 ອົງການຄຸ້ມຄອງ ແລະ ກວດກາ ວຽກງານເຂດເຕັກໂນໂລຊີລະດັບສູງ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ອົງການປົກຄອງຂັ້ນແຂວງ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານ ຂຕສ ໂດຍກົງ, ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາວຽກງານ ຂຕສ ປະກອບດ້ວຍ:

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ອົງການປົກຄອງ ຂັ້ນແຂວງ;
3. ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ.

ມາດຕາ 40 ສິດ ແລະ ໜ້າທີ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຂຕສ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຂຕສ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຂຕສ;
4. ຄົ້ນຄວ້າ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ຄະນະຄຸ້ມຄອງ ຂຕສ;
5. ປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການສຳຫຼວດ, ຈັດສັນ ແລະ ກຳນົດຈຸດທີ່ຕັ້ງ ຂຕສ ເພື່ອສະເໜີລັດຖະບານ ພິຈາລະນາ;
6. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ໃນການຈັດຕັ້ງປະຕິບັດວຽກງານ ຂຕສ;
7. ພິຈາລະນາ ຮັບຮອງ ບົດລາຍງານການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດເຕັກນິກ ກ່ຽວກັບການພັດທະນາ ຂຕສ;
8. ຊີ້ນຳ, ຕິດຕາມ ກວດກາ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ,ນະຄອນຫຼວງ ແລະ ຄະນະຄຸ້ມຄອງ ຂຕສ ໃນການປະຕິບັດວຽກງານ ຢູ່ ຂຕສ;

9. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການດໍາເນີນວຽກງານ ເຂດເຕັກໂນໂລຊີລະດັບສູງ;
10. ຮັບ ແລະ ພິຈາລະນາ ແກ້ໄຂ ຄໍາສະເໜີ ກ່ຽວກັບການເຄື່ອນໄຫວວຽກງານ ຂຕສ;
11. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ຂຕສ;
12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຂຕສ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 41 ສິດ ແລະ ໜ້າທີ່ຂອງອົງການປົກຄອງຂັ້ນແຂວງ**

ອົງການປົກຄອງຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ເຂດເຕັກໂນໂລຊີລະດັບສູງ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຂຕສ;
3. ຄົ້ນຄວ້າ, ແຕ່ງຕັ້ງບຸກຄະລາກອນ ປະກອບເຂົ້າໃນຄະນະຄຸ້ມຄອງ ຂຕສ;
4. ຊີ້ນໍາພະແນກການກ່ຽວຂ້ອງ ເພື່ອຮ່ວມກັບຜູ້ພັດທະນາ ໃນການສໍາຫຼວດ, ຈັດສັນ, ແກ້ໄຂ ແລະ ປະເມີນກ່ຽວກັບບັນຫາທີ່ດິນ ເພື່ອໃຊ້ແທນຄ່າເສຍຫາຍ ຕໍ່ຜູ້ໄດ້ຮັບຜົນກະທົບ ຈາກ ຂຕສ, ລວມທັງ ປັກຫຼັກເຂດແດນ;
5. ຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ອໍານວຍຄວາມສະດວກ ໃຫ້ແກ່ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນ ຂຕສ;
6. ຊີ້ນໍາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານວັດທະນາທໍາ-ສັງຄົມ ແລະ ວຽກງານອື່ນ ທີ່ກ່ຽວຂ້ອງກັບ ຂຕສ;
7. ຄຸ້ມຄອງ ແລະ ນໍາໃຊ້ງົບປະມານ ປະກອບສ່ວນຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ໃນການຊຸກຍູ້ ຕິດຕາມການພັດທະນາ ຂຕສ, ການພັດທະນາຊຸມຊົນ ແລະ ທ້ອງຖິ່ນ ຕາມລະບຽບການ;
8. ຮັບ ແລະ ພິຈາລະນາ ແກ້ໄຂ ຄໍາສະເໜີ ກ່ຽວກັບການເຄື່ອນໄຫວວຽກງານ ຂຕສ;
9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຂຕສ ຕໍ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນປົກກະຕິ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ສິດ ແລະ ໜ້າທີ່ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຂຕສ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຂຕສ;
3. ຄົ້ນຄວ້າ, ແຕ່ງຕັ້ງບຸກຄະລາກອນ ປະກອບເຂົ້າໃນຄະນະຄຸ້ມຄອງ ຂຕສ;
4. ຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານຂອງຄະນະຄຸ້ມຄອງ ຂຕສ;
5. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງພາຍໃນແຂວງ, ນະຄອນຫຼວງ ກ່ຽວກັບວຽກງານ ຂຕສ;
6. ຮັບ ແລະ ພິຈາລະນາ ແກ້ໄຂຄໍາສະເໜີ ກ່ຽວກັບການເຄື່ອນໄຫວວຽກງານ ຂຕສ;
7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຂຕສ ຕໍ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ອົງການປົກຄອງທ້ອງຖິ່ນ ຢ່າງເປັນປົກກະຕິ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 43 ສິດ ແລະ ໜ້າທີ່ຂອງກະຊວງອົງການລັດທຽບເທົ່າກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບ ອົງການຄຸ້ມຄອງ ແລະ ກວດກາວຽກງານ ຂຕສ, ຄະນະຄຸ້ມຄອງ ຂຕສ ໃນການຈັດຕັ້ງປະຕິບັດວຽກງານ ຂຕສ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຕົນ.

**ມາດຕາ 44 ເນື້ອໃນການກວດກາ**

ການກວດກາວຽກງານ ຂຕສ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຂຕສ;
2. ການປະຕິບັດ ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບວຽກງານ ຂຕສ;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານ ຂຕສ.

**ມາດຕາ 45 ຮູບການກວດກາ**

ການກວດກາວຽກງານ ຂຕສ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາ ທີ່ດໍາເນີນໄປ ຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 46 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດໍາລັດສະບັບນີ້ ເປັນຕົ້ນ ການພັດທະນາ, ການຄຸ້ມຄອງ ແລະ ການລົງທຶນຢູ່ໃນ ຂຕສ ທີ່ມີປະສິດທິຜົນ, ມີຄວາມສໍາຄັນຕໍ່ການພັດ ທະນາເສດຖະກິດ-ສັງຄົມ, ດຶງດູດ ແລະ ຊຸກຍູ້ ການພັດທະນາ ຂຕສ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 47 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດໍາລັດສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 48 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນໃຈກາງປະສານສົມທົບກັບ ກະຊວງ ,ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ ທັງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 49 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ **30** ທັນວາ 2025 ເປັນຕົ້ນໄປ.

ຕາງໜ້າລັດຖະບານ ແຫ່ງ ສປປລາວ
ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**